ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງ ກະສິກຳ ແລະ ປ່າໄມ້

ເລກທີ 0252 /ກປ
ນະຄອນຫຼວງວຽງຈັນ, ວັນທີ 14 FEB 2020

# ຂໍ້ຕົກລົງ
## ວ່າດ້ວຍ ການສ້າງເຂດປອດພະຍາດປາກເປື່ອຍລົງເລັບດ້ວຍການສັກຢາກັນພະຍາດ

- ອີງຕາມ ກົດໝາຍ ວ່າດ້ວຍການລ້ຽງສັດ ແລະ ການສັດຕະວະແພດ ເລກທີ 08/ສພຊ, ລົງວັນທີ 11 ພະຈິກ2016;
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 99/ນຍ, ລົງວັນທີ 09 ມີນາ 2017 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງກະສິກຳ ແລະ ປ່າໄມ້;
- ອີງຕາມ ໜັງສືສະເໜີ ຂອງກົມລ້ຽງສັດ ແລະ ການປະມົງ ສະບັບເລກທີ 0287/ກລປ, ລົງວັນທີ 06 ກຸມພາ 2020.

### ໝວດທີ 1
### ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບ ການສ້າງເຂດປອດພະຍາດປາກເປື່ອຍລົງເລັບດ້ວຍການສັກຢາກັນພະຍາດ ຢູ່ໃນ ສປປ ລາວ ເພື່ອໃຫ້ເປັນເຂດທີ່ມີລະບົບການຄຸ້ມຄອງ, ຕິດຕາມ, ກວດກາ ແລະ ປະເມີນສະຖານະການກ່ຽວກັບພະຍາດປາກເປື່ອຍລົງເລັບຢ່າງເຄັ່ງຄັດ ແລະ ມີປະສິດທິພາບ ແນໃສ່ສ້າງໃຫ້ເປັນເຂດລ້ຽງສັດໃຫຍ່ປອດພະຍາດ ທີ່ສາມາດສົ່ງອອກໄປຕ່າງປະເທດ.

**ມາດຕາ 2 ການສ້າງເຂດປອດພະຍາດປາກເປື່ອຍລົງເລັບດ້ວຍການສັກຢາກັນພະຍາດ**

ການສ້າງເຂດປອດພະຍາດປາກເປື່ອຍລົງເລັບ ດ້ວຍການສັກຢາກັນພະຍາດ ແມ່ນ ການກຳນົດຂອບເຂດ ທາງດ້ານພູມສາດຕາມທຳມະຊາດ ຫຼື ສິ່ງກີດກັ້ນທີ່ຄົນເຮົາສ້າງຂຶ້ນ ເພື່ອໃຫ້ເປັນສິ່ງກີດຂວາງບໍ່ໃຫ້ສັດທີ່ມີຄວາມສ່ຽງຕິດພະຍາດປາກເປື່ອຍລົງເລັບເຂົ້າໄປໃນເຂດໃດເຂດໜຶ່ງໄດ້. ການຄຸ້ມຄອງເຂດດັ່ງກ່າວນີ້ ແມ່ນປະຕິບັດຕາມວິທີການທີ່ອີງການ OIE ແນະນຳ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ ໃນຂໍ້ຕົກລົງສະບັບນີ້ມີຄວາມໝາຍ ດັ່ງນີ້:

**ພະຍາດປາກເປື່ອຍລົງເລັບ (FMD)** ໝາຍເຖິງພະຍາດຕິດຕໍ່ຮ້າຍແຮງຂອງສັດລ້ຽງ ແລະ ສັດປ່າປະເພດເລັບຄູ່ ເປັນຕົ້ນ ງົວ, ຄວາຍ, ໝູ, ແກະ, ແບ້, ກວາງ, ຟານ ແລະ ໝູປ່າ. ພະຍາດດັ່ງກ່າວ ເກີດຈາກເຊື້ອໄວຣັສພະຍາດປາກເປື່ອຍລົງເລັບ (FMDV), ສັດທີ່ເປັນພະຍາດນີ້ ຈະມີຕຸ່ມຢູ່ຕາມບໍລິເວນປາກ, ຫວ່າງເລັບ, ເຕົ້ານົມ ແລະ ນ້ຳລາຍໄຫລ;

**ເຂດປອດພະຍາດ** ໝາຍເຖິງ ເຂດປອດພະຍາດປາກເປື່ອຍລີ້ນເລັບດ້ວຍການສັກຢາກັນພະຍາດ ໂດຍແມ່ນເຂດທີ່ມີສັດໄດ້ຮັບການສັກຢາກັນພະຍາດປາກເປື່ອຍລີ້ນເລັບແລ້ວ ແລະ ບໍ່ມີກໍລະນີເກີດພະຍາດປາກເປື່ອຍລີ້ນເລັບຢູ່ໃນເຂດນັ້ນ;

**ສິ່ງກີດຂວາງທາງດ້ານພູມສາດທາງທຳມະຊາດ** ໝາຍເຖິງ ສິ່ງແວດລ້ອມທີ່ເກີດຂຶ້ນໂດຍທຳມະຊາດ ເປັນຕົ້ນ, ພູ, ຜາ, ປ່າໄມ້, ແມ່ນ້ຳ, ຫ້ວຍ, ຮ່ອງ, ເຫວ ລວມທັງປ່າໄມ້ປູກ ທີ່ສາມາດກີດກັ້ນບໍ່ໃຫ້ ສັດທີ່ມີຄວາມສ່ຽງຕິດພະຍາດປາກເປື່ອລີ້ນເລັບຜ່ານເຂົ້າໄປໄດ້;

**ສິ່ງກີດຂວາງທີ່ຄົນເຮົາສ້າງຂຶ້ນ** ໝາຍເຖິງ ສິ່ງກໍ່ສ້າງ ເປັນຕົ້ນ ຮົ້ວ, ກຳແພງ, ຮ່ອງ, ຂຸມ ລວມທັງ ເຄື່ອງມື ໄລ່ສັດ ຫຼື ກັບດັກ ທີ່ຄົນເຮົາສ້າງຂຶ້ນ ເພື່ອກີດກັ້ນບໍ່ໃຫ້ ສັດທີ່ມີຄວາມສ່ຽງຕິດພະຍາດປາກເປື່ອລີ້ນເລັບເຂົ້າໄປໄດ້;

**ພູມຄຸ້ມກັນຂອງຝູງສັດ** ໝາຍເຖິງ ພູມຄຸ້ມກັນພະຍາດຂອງຝູງສັດໃດໜຶ່ງ ພາຍຫຼັງທີ່ໄດ້ຮັບການສັກຢາກັນພະຍາດ;

**ອົງການ OIE** ໝາຍເຖິງ ອົງການສຸຂະພາບສັດສາກົນ

**FMD** ໝາຍເຖິງ ພະຍາດປາກເປື່ອຍລີ້ນເລັບ

**FMDV** ໝາຍເຖິງ ເຊື້ອໄວຣັສພະຍາດປາກເປື່ອຍລີ້ນເລັບ

### ມາດຕາ 4 ຂອບເຂດການນຳໃຊ້

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ກ່ຽວຂ້ອງກັບ ການລ້ຽງສັດ, ການປຸງແຕ່ງຜະລິດຕະພັນສັດ ແລະ ການສັດຕະວະແພດ ຢູ່ໃນ ສປປ ລາວ.

## ໝວດທີ 2
## ການສ້າງຕັ້ງເຂດປອດພະຍາດ, ເຂດກັນຊົນ ແລະ ເຂດທ້ອນໂຮມສັດໃຫຍ່

### ມາດຕາ 5 ເງື່ອນໄຂຂອງເຂດປອດພະຍາດ

ເຂດປອດພະຍາດ ຈະປະກາດໄດ້ຕ້ອງຄົບເງື່ອນໄຂ ດັ່ງນີ້:

1. ເປັນເຂດທີ່ອົງຄຸ້ມຄອງວຽກງານລ້ຽງສັດ ແລະ ສັດຕະວະແພດ ປະກາດເປັນເຂດປອດພະຍາດຊົ່ວຄາວ ຢ່າງເປັນທາງການ;
2. ມີເຂດກັນຊົນ ອ້ອມຮອບເຂດປອດພະຍາດ ໃນລັດສະໝີ ຢ່າງໜ້ອຍ 3 ກິໂລແມັດ ທີ່ໄດ້ເງື່ອນໄຂຕາມທີ່ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້;
3. ມີລະບົບການບໍລິການສັດຕະວະແພດ, ການເຝົ້າລະວັງ ແລະ ຄວບຄຸມພະຍາດສັດ, ການກວດກາ, ຕິດຕາມ ແລະ ຄວບຄຸມການເຄື່ອນຍ້າຍສັດ ແລະ ຜະລິດຕະພັນສັດ ເຂົ້າ-ອອກ ທີ່ມີປະສິດທິພາບ;
4. ມີການລ້ຽງງົວທົດລອງເປັນຕົວຊີ້ວັດ ໂດຍຄັດເລືອກເອົາງົວໜຸ່ມທີ່ມີອາຍຸລະຫວ່າງ 8 ຫາ 24 ເດືອນ ທີ່ບໍ່ເຄີຍເປັນພະຍາດປາກເປື່ອຍລີ້ນເລັບມາກ່ອນ ຈຳນວນ 30 ໂຕ ເພື່ອເປັນສັດເຝົ້າຍາມພະຍາດປາກເປື່ອຍລີ້ນເລັບ. ຖ້າກວດເຫັນສັດທົດລອງສະແດງອາການພະຍາດລະບາດ ແລະ ຜົນຂອງການວິໄຈຢັ້ງຢືນວ່າສັດຕິດເຊື້ອພະຍາດປາກເປື່ອຍລີ້ນເລັບ (FMDV) ຕ້ອງລາຍງານຫາ ກົມລ້ຽງສັດ ແລະ ການປະມົງ ຊາບໂດຍດ່ວນ ພ້ອມທັງດຳເນີນມາດຕະການດ້ານວິຊາການ ເພື່ອຄວບຄຸມພະຍາດ ຕາມວິທີທີ່ອົງການ OIE ແນະນຳ;

5. ມີການປະເມີນພູມຄຸ້ມກັນ ທັງການສັກຢາຕໍ່ພະຍາດປາກເປື່ອຍລີ້ງເລັບ ທັງການສັກຢາກັນພະຍາດ ຕາມວິທີທີ່ອົງການ OIE ແນະນຳ ໂດຍຕ້ອງໃຫ້ມີອັດຕາພູມຄຸ້ມກັນພະຍາດປາກເປື່ອຍລີ້ງເລັບໃນຝູງ ສູງກວ່າ 70%;
6. ຜົນກວດ Nonstructure Protein (NSP) ຢູ່ໃນລະດັບຍອມຮັບໄດ້ ຕາມທີ່ໄດ້ຕົກລົງກັບ ລະຫວ່າງ ອົງການຄຸ້ມຄອງວຽກງານລ້ຽງສັດ ແລະ ສັດຕະວະແພດ ຂອງ ສປປ ລາວ ແລະ ອົງການກ່ຽວຂ້ອງ ຂອງ ປະເທດຄູ່ຄ້າ;
7. ພາຍໃນ 2 ປີ ຕ້ອງບໍ່ມີການລາຍງານການເກີດພະຍາດປາກເປື່ອຍລີ້ງເລັບ ແລະ ບໍ່ພົບກໍລະນີ ກວດພົບເຊື້ອພະຍາດປາກເປື່ອຍລີ້ງເລັບ ຈຶ່ງສາມາດປະກາດເປັນເຂດປອດພະຍາດ ແບບຖາວອນໄດ້;

**ມາດຕາ 6 ຂັ້ນຕອນການສ້າງເຂດປອດພະຍາດ**

ການສ້າງຕັ້ງເຂດປອດພະຍາດ ໃຫ້ປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ກົມລ້ຽງສັດ ແລະ ການປະມົງ ສົມທົບກັບ ພະແນກກະສິກຳ ແລະ ປ່າໄມ້ຂັ້ນແຂວງ, ຫ້ອງການກະສິກຳ ແລະ ປ່າໄມ້ຂັ້ນເມືອງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ລົງສຳຫລວດຄວາມເປັນໄປໄດ້ ແລ້ວລາຍງານໃຫ້ລັດຖະມົນຕີ, ເຈົ້າແຂວງ ແລະ ເຈົ້າເມືອງຮັບຊາບ;
2. ກະຊວງກະສິກຳ ແລະ ປ່າໄມ້ ແຕ່ງຕັ້ງ ຄະນະຮັບຜິດຊອບສ້າງເຂດປອດພະຍາດ ຕາມການສະເໜີຂອງ ກົມລ້ຽງສັດ ແລະ ການປະມົງ;
3. ຄະນະຮັບຜິດຊອບສ້າງເຂດປອດພະຍາດ ລົງສຳຫລວດ ແລະ ກຳນົດຂອບເຂດ ພ້ອມທັງເກັບກຳຂໍ້ມູນ ສະຖິຕິ ງົວ, ຄວາຍ, ໝູ, ແກະ, ແບ້ ລວມທັງ ສັດປ່າເລັບຄູ່ ແລ້ວ ສ້າງແຜນລະອຽດກ່ຽວກັບການສ້າງເຂດປອດພະຍາດ ພ້ອມທັງ ລາຍງານໃຫ້ກະຊວງກະສິກຳ ແລະ ປ່າໄມ້ ແລະ ກົມລ້ຽງສັດ ແລະ ການປະມົງ ຊາບ;
4. ກົມລ້ຽງສັດ ແລະ ການປະມົງ ສະເໜີລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ປະກາດເປັນເຂດປອດພະຍາດຊົ່ວຄາວ;
5. ກະຊວງກະສິກຳ ແລະ ປ່າໄມ້ ແຕ່ງຕັ້ງ ໜ່ວຍປະຕິບັດງານປະຈຳເຂດປອດພະຍາດ ເພື່ອດຳເນີນການ ເຝົ້າລະວັງ, ຕິດຕາມ, ກວດກາແລະ ກັກກັນ ພ້ອມທັງສະຫລຸບລາຍງານ ກ່ຽວກັບການປະຕິບັດເງື່ອນໄຂທີ່ກຳນົດໄວ້ ໃນຂໍ້ຕົກລົງສະບັບນີ້;
6. ພາຍຫລັງເຂດປອດພະຍາດ ຊົ່ວຄາວ ຄົບເງື່ອນໄຂທີ່ກຳນົດໃນ **ມາດຕາ 5** ຂອງຂໍ້ຕົກລົງສະບັບນີ້, ໃຫ້ ກົມລ້ຽງສັດ ແລະ ການປະມົງ ສະເໜີຕໍ່ ລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ປະກາດເປັນເຂດປອດພະຍາດຖາວອນ ຢ່າງເປັນທາງການ.

**ມາດຕາ 7 ເຂດປອດພະຍາດ ຊົ່ວຄາວ**

ເຂດປອດພະຍາດຊົ່ວຄາວ ແມ່ນເຂດທີ່ກົມລ້ຽງສັດ ແລະ ການປະມົງ ໄດ້ສຶກສາຄວາມເປັນໄປໄດ້ ແລະ ຖືກສະເໜີຕໍ່ ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ປະກາດເປັນເຂດຊົ່ວຄາວ ເພື່ອສ້າງເປັນເຂດປອດພະຍາດ ຖາວອນ ຊຶ່ງເຂດດັ່ງກ່າວ ນີ້ ຕ້ອງມີເງື່ອນໄຂຕາມທີ່ໄດ້ກຳນົດໄວ້ໃນ **ມາດຕາ 5** ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 8 ເຂດກັນຊົນຂອງເຂດປອດພະຍາດ**

ເຂດກັນຊົນຂອງເຂດປອດພະຍາດ ແມ່ນເຂດທີ່ ອົງການຄຸ້ມຄອງ ວຽກງານລ້ຽງສັດ ແລະ ສັດຕະວະແພດ ສ້າງຂຶ້ນໃຫ້ເປັນເຂດເຝົ້າລະວັງພະຍາດສັດ ຢູ່ອ້ອມຮອບຂອງເຂດປອດພະຍາດ ໂດຍຕ້ອງຕັ້ງຢູ່ອ້ອມຮອບຂອບຂອງເຂດປອດພະຍາດ ໃນວົງລັດສະໝີ ຢ່າງໜ້ອຍ 3 ກິໂລແມັດ. ສັດທີ່ມີຄວາມສ່ຽງເປັນພະຍາດປາກເປື່ອຍລີ້ງເລັບ ຢູ່ໃນເຂດ

ດັ່ງກ່າວ ຕ້ອງໄດ້ຂຶ້ນທະບຽນພິມສັດ, ສັກຢາກັນພະຍາດສັດ, ມີລະບົບເກັບກຳຂໍ້ມູນ, ຕິດຕາມ, ເຝົ້າລະວັງພະຍາດ ແລະ ມີການປະເມີນລະດັບພູມຄຸ້ມກັນພະຍາດສັດໃນຝູງ ຢ່າງເປັນປົກກະຕິ.

**ມາດຕາ 9 ເຂດທ້ອນໂຮມສັດໃຫຍ່**

ເຂດທ້ອນໂຮມສັດໃຫຍ່ ແມ່ນເຂດທີ່ ອົງການຄຸ້ມຄອງວຽກງານລ້ຽງສັດ ແລະ ສັດຕະວະແພດ ກຳນົດຂຶ້ນ ໃຫ້ເປັນເຂດລ້ຽງທອນສັດ ໂດຍຕ້ອງຕັ້ງຢູ່ອ້ອມເຂດກັນຊົນ ໃນລັດສະໜີຫ່າງອອກໄປຈາກ ເຂດກັນຊົນ ຕາມທີ່ອົງການຄຸ້ມຄອງວຽກງານລ້ຽງສັດ ແລະ ສັດຕະວະແພດ ຂອງ ສປປ ລາວ ແລະ ປະເທດນຳເຂົ້າ ກຳນົດ. ການສ້າງຕັ້ງຟາມລ້ຽງສັດໃຫຍ່ ຢູ່ໃນເຂດດັ່ງກ່າວ ຕ້ອງຂໍອະນຸຍາດ ຕາມຂໍ້ຕົກລົງຂອງລັດຖະມົນຕີ ວ່າດ້ວຍການຄຸ້ມຄອງກິດຈະການຟາມລ້ຽງສັດ ໃນ ສປປ ລາວ ສະບັບເລກທີ 0209/ກປ, ລົງວັນທີ 06 ກຸມພາ 2013 ແລະ ໄດ້ຮັບການຢັ້ງຢືນມາດຕະຖານຟາມລ້ຽງງົວຊີ້ນ ຕາມຂໍ້ຕົກລົງຂອງຫົວໜ້າກົມລ້ຽງສັດ ແລະ ການປະມົງ ເລກທີ AFSTD-LF 2018-00003 ລົງວັນທີ 17 ກໍລະກົດ 2018.

## ໝວດທີ 3
## ການຄຸ້ມຄອງເຂດປອດພະຍາດ, ເຂດກັນຊົນ ແລະ ເຂດທ້ອນໂຮມສັດໃຫຍ່

**ມາດຕາ 10 ລະບົບການຄຸ້ມຄອງດ້ານສັດຕະວະແພດ**

ລະບົບການຄຸ້ມຄອງສັດຕະວະແພດ ໝາຍເຖິງຂະບວນການຈັດຕັ້ງປະຕິບັດລະບຽບການດ້ານສັດຕະວະແພດ, ການສ້າງຕັ້ງອົງການ, ການກຳນົດ ນະໂຍບາຍ, ຍຸດທະສາດ, ແຜນງານ, ຂັ້ນຕອນ, ມາດຕະຖານ, ວິທີການບໍລິການດ້ານວິຊາການ ລວມທັງການເກັບກຳຂໍ້ມູນຂ່າວສານດ້ານສຸຂະພາບສັດ, ການປະເມີນ, ການປະສານງານ-ສື່ສານ ແລະ ການວາງແຜນງົບປະມານ ກ່ຽວກັບວຽກງານສຸຂະພາບສັດ ຢູ່ໃນອົງການຄຸ້ມຄອງວຽກງານລ້ຽງສັດ ແລະ ສັດຕະວະແພດ ຊຶ່ງລະບົບດັ່ງກ່າວຕ້ອງໄດ້ປະກອບສ່ວນເຂົ້າໃນການສ້າງ ແລະ ຄຸ້ມຄອງ ເຂດປອດພະຍາດຢ່າງມີປະສິດທິພາບ.

**ມາດຕາ 11 ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ**

ການສ້າງເຂດປອດພະຍາດ, ເຂດກັນຊົນ ແລະ ເຂດທ້ອນໂຮມສັດຕ້ອງສອດຄ່ອງກັບ ກົດໝາຍວ່າດ້ວຍການລ້ຽງສັດ ແລະ ການສັດຕະວະແພດ ສະບັບທີ 08/ສພຊ, ລົງວັນທີ 11 ພະຈິກ 2016, ດຳລັດ ວ່າດ້ວຍການກັນ ແລະ ຄວບຄຸມພະຍາດສັດ ເລກທີ 228/ລບ, ລົງວັນທີ 31 ພຶດສະພາ 2012 ແລະ ລະບຽບການອື່ນທີ່ກ່ຽວຂ້ອງ ເພື່ອຮັບປະກັນໃຫ້ແກ່ການປະຕິບັດມາດຕະການດ້ານວິຊາການ ແລະ ຄວບຄຸມຜູ້ລະເມີດກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ.

**ມາດຕາ 12 ການບໍລິການດ້ານສັດຕະວະແພດ**

ກົມລ້ຽງສັດ ແລະ ການປະມົງ ເປັນເຈົ້າການໃນການສ້າງແຜນພັດທະນາການບໍລິການດ້ານສັດຕະວະແພດ ແລະ ສົມທົບກັບທ້ອງຖິ່ນ ປະກອບບຸກຄະລາກອນດ້ານສັດຕະວະແພດ ເຂົ້າໃນການຈັດຕັ້ງປະຕິບັດງານ ເປັນຕົ້ນແມ່ນການເຝົ້າລະວັງພະຍາດສັດ, ການຂຶ້ນທະບຽນພິມສັດ, ການສັກຢາກັນພະຍາດ, ການສືບສວນ-ສອບສວນດ້ານລະບາດວິທະຍາ, ການຄວບຄຸມການເຄື່ອນຍ້າຍສັດ ແລະ ການກັກກັນສັດ ລວມທັງການສ້າງແຜນຮອງຮັບສຸກເສີນໃນການໂຕ້ຕອບພະຍາດລະບາດ ຢູ່ໃນເຂດປອດພະຍາດ, ເຂດກັນຊົນ ແລະ ເຂດທ້ອນໂຮມສັດໃຫຍ່ ໃຫ້ມີປະສິດທິພາບ.

**ມາດຕາ 13 ການວິໄຈພະຍາດສັດ**

ກົມລ້ຽງສັດ ແລະ ການປະມົງ ຕ້ອງສ້າງຄວາມພ້ອມ ກ່ຽວກັບ ພື້ນຖານວັດຖຸເຕັກນິກ, ເຄື່ອງມື ແລະ ຄວາມອາດສາມາດໃນການວິໄຈ ເພື່ອໃຫ້ສາມາດບົ່ງມະຕິພະຍາດປາກເປື່ອຍລີ້ງເລັບ ແລະ ພະຍາດອື່ນ ຢູ່ໃນເຂດປອດພະຍາດ, ເຂດກັນຊົນ ແລະ ເຂດທ້ອນໂຮມສັດໃຫຍ່ ໃຫ້ວ່ອງໄວ ແລະ ຊັດເຈນ ພ້ອມທັງ ຮັບປະກັນການຄຸ້ມຄອງຫ້ອງວິໄຈໃຫ້ມີຄຸນນະພາບ;

**ມາດຕາ 14 ການຂຶ້ນທະບຽນພິມສັດ ແລະ ລະບົບການສືບຍ້ອນຫລັງປະຫວັດຂອງສັດ**

ສັດໃຫຍ່ທຸກໂຕທີ່ຈະນຳເຂົ້າມາລ້ຽງທອມໃນເຂດທ້ອນໂຮມສັດໃຫຍ່, ເຂດກັນຊົນ ແລະ ເຂດປອດພະຍາດ ຕ້ອງໄດ້ຂຶ້ນທະບຽນພິມສັດທີ່ມີລະຫັດປະຈຳໂຕພຽງລະຫັດດຽວ ຕາມວິທີການທີ່ກຳນົດໄວ້ໃນ ຂໍ້ຕົກລົງຂອງລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 1974/ກປ, ລົງວັນທີ 23 ສິງຫາ 2012 ແລະ ມີລະບົບການສືບຍ້ອນຫລັງປະຫວັດຂອງສັດ ທີ່ສາມາດກວດກາຂໍ້ມູນແຫລ່ງທີ່ມາຂອງສັດໄດ້ຢ່າງຊັດເຈນ.

**ມາດຕາ 15 ການສັກຢາກັນພະຍາດປາກເປື່ອຍລີ້ງເລັບ**

ສັດທຸກໂຕທີ່ລ້ຽງຢູ່ໃນເຂດທ້ອນໂຮມສັດໃຫຍ່, ເຂດກັນຊົນ ແລະ ເຂດປອດພະຍາດ ໄດ້ສັກຢາກັນພະຍາດປາກເປື່ອຍລີ້ງເລັບແບບບັງຄັບ ໃຫ້ໄດ້ 100% ຫຼື ໃຫ້ຝູງສັດມີອັດຕາການສັກຢາໃນຝູງ ກວມ ບໍ່ໃຫ້ຫຼຸດ 95% ຕະຫລອດປີ, ການສັກຢາກັນພະຍາດປາກເປື່ອຍລີ້ງເລັບ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ນຳໃຊ້ຢາກັນພະຍາດຊະນິດເຊື້ອຕາຍ ທີ່ກົງກັບຊະນິດ ແລະ ສາຍພັນຂອງພະຍາດທີ່ມັກເກີດຢູ່ໃນຂົງເຂດ;
2. ຢາກັນພະຍາດຕ້ອງມີຄຸນນະພາບ ຕາມທີ່ອົງການ OIE ກຳນົດ;
3. ຢາຕ້ອງເກັບຮັກສາ ແລະ ຂົນສົ່ງຢູ່ໃນຄວາມເຢັນ.

**ມາດຕາ 16 ການເຝົ້າລະວັງ**

ກົມລ້ຽງສັດ ແລະ ການປະມົງ ສົມທົບກັບ ຂະແໜງລ້ຽງສັດ ແລະ ການປະມົງ ດຳເນີນການເຝົ້າລະວັງພະຍາດປາກເປື່ອຍລີ້ງເລັບ ຢູ່ໃນເຂດປອດພະຍາດ, ເຂດທ້ອນໂຮມສັດໃຫຍ່ ແລະ ເຂດກັນຊົນ ຕາມວິທີການ ທີ່ອົງການສຸຂະພາບສັດອົງການ OIE ແນະນຳ ເປັນຕົ້ນ ການສືບສວນ-ສອບສວນດ້ານລະບາດວິທະຍາ, ການສຸ່ມເກັບຕົວຢ່າງ, ການວິໄຈການວິເຄາະຂໍ້ມູນ ແລະ ການລາຍງານ ພ້ອມທັງ ປະເມີນພູມຄຸ້ມກັນຕໍ່ພະຍາດປາກເປື່ອຍລີ້ງເລັບ ຫຼັງການສັກຢາກັນພະຍາດ.

**ມາດຕາ 17 ມາດຕະການຄວບຄຸມການເຄື່ອນຍ້າຍສັດ**

ການເຄື່ອນຍ້າຍສັດ ຕ້ອງປະຕິບັດມາດຕະການ ດັ່ງນີ້:

1) ການເຄື່ອນຍ້າຍສັດຈາກເຂດອື່ນເຂົ້າເຂດທ້ອນໂຮມສັດໃຫຍ່ ຕ້ອງມີເລກທະບຽນພິມສັດ ທີ່ສາມາດກວດສອບແຫຼ່ງທີ່ມາໄດ້, ມີສຸຂະພາບແຂງແຮງດີ ບໍ່ພົບອາການຂອງພະຍາດຕິດຕໍ່ຮ້າຍແຮງ ແລະ ໄດ້ຜ່ານການກວດກາຢັ້ງຢືນຈາກສັດຕະວະແພດທີ່ໄດ້ຮັບມອບໝາຍ;
2) ສັດທີ່ຈະເຄື່ອນຍ້າຍສົ່ງອອກຈາກ ສປປ ລາວ ໄປ ຕ່າງປະເທດ ຕ້ອງຜ່ານການກັກກັນຢູ່ໃນສະຖານທີ່ກັນສັດ ທີ່ອົງການທີ່ກ່ຽວຂ້ອງຂອງ ສປປ ລາວ ແລະ ປະເທດນຳເຂົ້າ ຮັບຮອງ ຕາມໄລຍະເວລາທີ່ໄດ້ກຳນົດໄວ້;
3) ການເຄື່ອນຍ້າຍສັດ ຕ້ອງໄປຕາມເສັ້ນທາງທີ່ໄດ້ກຳນົດໄວ້;
4) ພາຫານະ ແລະ ເຄື່ອງມືຮັບໃຊ້ການເຄື່ອນຍ້າຍສັດ ຕ້ອງລ້າງ ແລະ ຂ້າເຊື້ອ ທັງກ່ອນ ແລະ ຫຼັງການໃຊ້ງານ.

**ມາດຕາ 18 ມາດຕະການສືບສວນ-ສອບສວນ ແລະ ການລາຍງານພະຍາດ**

ມອບໃຫ້ກົມລ້ຽງສັດ ແລະ ການປະມົງ ທົບທວນ ແລະ ປັບປຸງ ລະບົບການສືບສວນ-ສອບສວນດ້ານລະບາດວິທະຍາ, ການລາຍງານພະຍາດສັດ ແລະ ມາດຕະການທຳລາຍສັດທີ່ຕິດເຊື້ອພະຍາດໃຫ້ຊັດເຈນ ໂດຍໃຫ້ສ້າງແຜນຮອງຮັບສຸກເສີນໄວ້ລ່ວງໜ້າ ຊຶ່ງຕ້ອງກວມເອົາ ການກະກຽມດ້ານບຸກຄະລາກອນ, ງົບປະມານ, ເຄື່ອງມືວັດຖຸອຸປະກອນ ລວມທັງ ການສະໜອງຢາສັດຕະວະແພດ ແລະ ຄວາມພ້ອມດ້ານການວິໄຈພະຍາດສັດ.

**ມາດຕາ 19 ມາດຕະການໃນການຄວບຄຸມ ແລະ ທຳລາຍເຊື້ອພະຍາດປາກເປື່ອຍລີ້ງເລັບ**

ກໍລະນີສົງໄສ ຫລື ເກີດພະຍາດລະບາດສັດ ຢູ່ເຂດຫ້ອນໂຮມສັດ, ເຂດກັນຊົນ ແລະ ເຂດປອດພະຍາດ ໃຫ້ປະຕິບັດມາດຕະການ ດັ່ງນີ້:

1) ດຳເນີນການ ສືບສວນ-ສອບສວນດ້ານລະບາດວິທະຍາ ແລະ ເກັບຕົວຢ່າງສົ່ງເຂົ້າຫ້ອງວິໄຈພະຍາດສັດເພື່ອຢືນຢັນສາເຫດຂອງພະຍາດ ພ້ອມທັງລາຍງານໃຫ້ແກ່ອົງການທີ່ກ່ຽວຂ້ອງຂອງ ສປ ຈີນ ແລະ ສປປ ລາວ ຊາບພາຍໃນ 24 ຊົ່ວໂມງ;
2) ຖ້າຜົນການວິໄຈພະຍາດສັດ ຢັ້ງຢືນການກວດພົບເຊື້ອພະຍາດປາກເປື່ອຍລີ້ງເລັບ ຕ້ອງປະກາດເປັນເຂດພະຍາດລະບາດສັດ ໂດຍກຳນົດເຂດຄວບຄຸມພະຍາດຢ່າງເຄັ່ງຄັດໃນວົງລັດສະໝີ 3-5 ກິໂລແມັດອ້ອມຮອບຂອງຈຸດລະບາດ ພ້ອມທັງກຳນົດເຂດເຝົ້າລະວັງພະຍາດຢູ່ໃນວົງລັດສະໝີ 30 ກິໂລແມັດ ອ້ອມຮອບເຂດຄວບຄຸມພະຍາດຢ່າງເຄັ່ງຄັດ. ການປະກາດເປັນເຂດພະຍາດລະບາດສັດ;
3) ດຳເນີນມາດຕະການໂຕ້ຕອບ ຕາມມາດຕາ 29 ຂອງກົດໝາຍວ່າດ້ວຍການລ້ຽງສັດ ແລະ ການສັດຕະວະແພດ ເລກທີ 08/ສພຊ, ລົງວັນທີ 11 ພະຈິກ 2016.
4) ຫ້າມເຄື່ອນຍ້າຍສັດທີ່ມີຄວາມສ່ຽງຕິດພະຍາດປາກເປື່ອຍລີ້ງເລັບ ອອກຈາກເຂດຄວບຄຸມພະຍາດຢ່າງເຄັ່ງຄັດ ແລະ ເຂດເຝົ້າລະວັງພະຍາດ;
5) ໂຈະການເຄື່ອນຍ້າຍສັດ ແລະ ຜະລິດຕະພັນສັດ ເຂົ້າ-ອອກ ໃນເຂດປອດພະຍາດ ນັບຕັ້ງແຕ່ມື້ທີ່ກວດພົບພະຍາດ ຮອດມື້ສຸດທ້າຍທີ່ບໍ່ພົບກໍລະນີໃໝ່ ແລ້ວ ບວກໃສ່ 30 ວັນ;

**ມາດຕາ 20 ມາດຕະການໃນການຄຸ້ມຄອງເອກະສານ**

ບັນດາເອກະສານ ເປັນຕົ້ນ ລະບຽບ, ມາດຕະຖານ, ຄູ່ມືປະຕິບັດ ແລະ ຂໍ້ມູນທາງເອເລັກໂຕຣນິກທີ່ກ່ຽວຂ້ອງກັບການລ້ຽງ, ສຸຂະພາບ, ການເຄື່ອນຍ້າຍ, ການກັກກັນ ລວມທັງການບໍລິຫານຈັດການທັງໝົດ ຕ້ອງມີການຈັດເກັບຮັກສາຢ່າງເປັນລະບົບ ເພື່ອໃຫ້ສາມາດເຂົ້າເຖິງໄດ້ງ່າຍ;

## ໝວດທີ 4
## ການກວດກາ ວຽກງານສ້າງເຂດປອດພະຍາດ

**ມາດຕາ 21 ສິດ ແລະ ໜ້າທີ່ ຂອງ ກົມລ້ຽງສັດ ແລະ ການປະມົງ**

ໃນການຄຸ້ມຄອງວຽກງານສ້າງເຂດປອດພະຍາດ, ກົມລ້ຽງສັດ ແລະ ການປະມົງ ມີສິດ ແລະ ໜ້າທີ່ດັ່ງນີ້:

1. ປະສານສົມທົບກັບພະແນກກະສິກຳ ແລະ ປ່າໄມ້ຂັ້ນແຂວງ, ຫ້ອງການກະສິກຳ ແລະ ປ່າໄມ້ຂັ້ນເມືອງ ລົງສຳຫລວດຄວາມເປັນໄປໄດ້ໃນການສ້າງເຂດປອດພະຍາດ;

2. ນຳສະເໜີລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ແຕ່ງຕັ້ງ ຄະນະຮັບຜິດຊອບ ແລະ ຊີ້ນຳໃນການ ສ້າງແຜນລະອຽດກ່ຽວກັບການສ້າງເຂດປອດພະຍາດ;
3. ນຳສະເໜີລັດຖະມົນຕີປະກາດເຂດປອດພະຍາດ ຊົ່ວຄາວ ແລະ ຖາວອນ;
4. ຊຸກຍູ້ ຕິດຕາມ ທີມງານວິຊາການ ແລະ ດຳເນີນການເຝົ້າລະວັງພະຍາດ, ການບໍລິການ ແລະ ສະຫລຸບລາຍງານກ່ຽວກັບການປະຕິບັດເງື່ອນໄຂເຂດປອດພະຍາດ;
5. ສ້າງລະບົບປ້ອງກັນ ແລະ ຄວບຄຸມພະຍາດປາກເປື່ອຍລີ້ນເລັບຢູ່ໃນເຂດປອດພະຍາດ ດຳເນີນການປະເມີນຄວາມສ່ຽງ, ກວດກາ ແລະ ຢັ້ງຢືນ ດ້ານສຸຂານາໄມສັດ ແລະ ຜະລິດຕະພັນສັດ ແລະ ປະເມີນຜົນຂອງການສັກຢາກັນພະຍາດປາກເປື່ອຍລີ້ນເລັບ;
6. ຮ່າງມາດຕະຖານເຕັກນິກ, ລະບຽບການສະເພາະ ຄູ່ມືແນະນຳ ກ່ຽວກັບການລ້ຽງສັດ, ການຮັກສາສຸຂະພາບສັດ, ການຄວບຄຸມການເຄື່ອນຍ້າຍສັດ ແລະ ຜະລິດຕະພັນສັດ ເຂົ້າ-ອອກ ເຂດປອດພະຍາດ;
7. ປຶກສາຫາລື ກັບປະເທດຄູ່ຄ້າ ກ່ຽວກັບ ການກຳນົດຄວາມເທົ່າທຽມກັນ ແລະ ການຮັບຮູ້ມາດຕະການໃນການຄຸ້ມຄອງເຂດປອດພະຍາດ ;
8. ນຳໃຊ້ມາດຕະການຕໍ່ຜູ້ທີ່ລະເມີດລະບຽບການຄຸ້ມຄອງເຂດປອດພະຍາດ
9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 22 ສິດ ແລະ ໜ້າທີ່ ຂອງ ຂະແໜງລ້ຽງສັດ ແລະ ການປະມົງຂັ້ນແຂວງ**

ສິດ ແລະ ໜ້າທີ່ຂອງຂະແໜງລ້ຽງສັດ ແລະ ການປະມົງ ແຂວງ ແລະ ນະຄອນຫຼວງ ມີດັ່ງນີ້:

1. ປະສານສົມທົບກັບອົງການຄຸ້ມຄອງຂັ້ນສູນກາງ ແລະ ຂັ້ນເມືອງ ດຳເນີນການສຳຫລວດຄວາມເປັນໄປໄດ້ໃນການສ້າງເຂດປອດພະຍາດ;
2. ຈັດຕັ້ງປະຕິບັດແຜນການປ້ອງກັນ ແລະ ຄວບຄຸມພະຍາດປາກເປື່ອຍລີ້ນເລັບຂອງອົງການຄຸ້ມຄອງວຽກງານລ້ຽງສັດ ແລະ ສັດຕະວະແພດ ຂັ້ນສູນກາງ;
3. ກວດກາ, ຕິດຕາມ ແລະ ລາຍງານ ການປະຕິບັດມາດຕະການ ແລະ ລະບຽບການກ່ຽວກັບການຄຸ້ມຄອງເຂດກັນຊົນ ແລະ ເຂດປອດພະຍາດ;
4. ເຂົ້າຮ່ວມການປະເມີນຄວາມສ່ຽງ ແລະ ກວດກາການລ້ຽງສັດ, ການເຄື່ອນຍ້າຍສັດ ເຂົ້າ-ອອກ ເຂດປອດພະຍາດ;
5. ນຳໃຊ້ມາດຕະການດ້ານວິຊາການ ເປັນຕົ້ນ ການເຝົ້າລະວັງ, ການກັນ, ຄວບຄຸມ ແລະ ກຳຈັດພະຍາດສັດ ຢູ່ໃນເຂດປອດພະຍາດ;
6. ນຳໃຊ້ມາດຕະການຕໍ່ຜູ້ທີ່ລະເມີດລະບຽບການຄຸ້ມຄອງເຂດປອດພະຍາດ ;
7. ຈັດຕັ້ງປະຕິບັດຄຳແນະນຳດ້ານວິຊາການ ກ່ຽວກັບການລ້ຽງສັດ ແລະ ການຄຸ້ມຄອງ ເຂດປອດພະຍາດ ທີ່ອົງການຄຸ້ມຄອງວຽກງານ ລ້ຽງສັດ ແລະ ສັດຕະວະແພດຂັ້ນສູນກາງກຳນົດ;
8. ສະເໜີ ກົມລ້ຽງສັດ ແລະ ການປະມົງກ່ຽວກັບການປະກາດ ແລະ ຮັບຮອງເປັນເຂດປອດພະຍາດ;
9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 23 ສິດ ແລະ ໜ້າທີ່ ຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ, ເທດສະບານ, ນະຄອນ**

ສິດ ແລະ ໜ້າທີ່ຂອງ ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ, ເທດສະບານ ແລະ ນະຄອນ ມີ ດັ່ງນີ້:

1. ປະສານສົມທົບກັບອົງການຄຸ້ມຄອງຂັ້ນສູນກາງ ແລະ ຂັ້ນແຂວງ ດຳເນີນການສຳຫລວດຄວາມເປັນໄປໄດ້ໃນການສ້າງເຂດປອດພະຍາດ;
2. ຈັດຕັ້ງປະຕິບັດແຜນການປ້ອງກັນ ແລະ ຄວບຄຸມພະຍາດປາກເປື່ອຍລີ້ງເລັບໃນຂອບເຂດເມືອງຂອງຕົນ;
3. ເຂົ້າຮ່ວມການປະເມີນຄວາມສ່ຽງ ແລະ ກວດກາການລ້ຽງສັດ, ການເຄື່ອນຍ້າຍສັດ ແລະ ຜະລິດຕະພັນສັດເຂົ້າ-ອອກ ເຂດກັນຊົນ ແລະ ເຂດປອດພະຍາດ;
4. ນຳໃຊ້ມາດຕະການທາງດ້ານວິຊາການ ເພື່ອເຝົ້າລະວັງ, ກັນ, ຄວບຄຸມ ແລະ ກາຈັດພະຍາດສັດຕາມການຊີ້ນຳຂອງອົງການຄຸ້ມຄອງຂັ້ນແຂວງ;
5. ສະເໜີຫາຂັ້ນແຂວງ ເພື່ອນຳໃຊ້ມາດຕະການຕໍ່ຜູ້ທີ່ບໍ່ໃຫ້ຄວາມຮ່ວມມື ໃນການປະຕິບັດລະບຽບການຂອງເຂດປອດພະຍາດ;
6. ຈັດຕັ້ງປະຕິບັດ ຄຳແນະນຳດ້ານວິຊາການ ກ່ຽວກັບການຄຸ້ມຄອງເຂດປອດພະຍາດ ທີ່ອົງການຄຸ້ມຄອງຂັ້ນສູນກາງກຳນົດ;
7. ອຳນວຍຄວາມສະດວກ ແລະ ກວດກາ ໃນການຈັດຕັ້ງປະຕິບັດວຽກງານເຂດປອດພະຍາດ ທັງພາຍໃນ ແລະ ພາຍນອກເມືອງຂອງຕົນ;
8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

### ມາດຕາ 24 ສິດ ແລະ ໜ້າທີ່ ຂອງໜ່ວຍປະຕິບັດງານປະຈຳເຂດປອດພະຍາດ

ໜ່ວຍປະຕິບັດງານປະຈຳເຂດປອດພະຍາດ ແມ່ນຄະນະເຈົ້າໜ້າທີ່ສັດຕະວະແພດ ທີ່ກະຊວງກະສິກຳ ແລະ ປ່າໄມ້ ແຕ່ງຕັ້ງຂຶ້ນ ຊຶ່ງມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເຂົ້າກວດກາໃນສະຖານທີ່ລ້ຽງສັດ, ກັກກັນ, ເຕົ້າໂຮມສັດ ແລະ ສະຖານທີ່ກ່ຽວຂ້ອງອື່ນ ຕາມການມອບໝາຍ ຢູ່ໃນເຂດປອດພະຍາດ;
2. ກວດສອບ ເອກະສານຕ່າງໆທີ່ກ່ຽວຂ້ອງກັບສັດ ແລະ ຜະລິດຕະພັນສັດ;
3. ເກັບຕົວຢ່າງເພື່ອການກວດກາວິໄຈຊອກຫາພະຍາດ ແລະ ສິ່ງທີ່ເປັນອັນຕະລາຍ ພ້ອມທັງສືບສວນ-ສອບສວນຫາສາເຫດຂອງການເກີດພະຍາດ;
4. ສົມທົບກັບຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ດຳເນີນການຄວບຄຸມການເຄື່ອນຍ້າຍສັດ ແລະ ຜະລິດຕະພັນສັດ, ໂຄສະນາເຜີຍແຜ່, ບໍລິການດ້ານສັດຕະວະແພດໃຫ້ແກ່ຜູ້ລ້ຽງສັດຢູ່ໃນເຂດປອດພະຍາດ;
5. ລາຍງານຕໍ່ການຈັດຕັ້ງຂັ້ນເທິງຖັດຕົນ ຢ່າງເປັນປົກກະຕິ ແລະ ໃນ ກໍລະນີພົບການລະເມີດ ຫຼື ບໍ່ໃຫ້ຄວາມຮ່ວມມືຂອງຜູ້ປະກອບການ;
6. ປະຕິບັດ ສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## ໝວດທີ 4
## ບົດບັນຍັດສຸດທ້າຍ

**ມາດຕາ 25 ການຈັດຕັ້ງປະຕິບັດ**

ມອບໃຫ້ກົມລ້ຽງສັດ ແລະ ການປະມົງ ເປັນໃຈກາງສົມທົບກັບ ຂະແໜງການກະສິກຳ ແລະ ປ່າໄມ້ ຂັ້ນທ້ອງຖິ່ນ ແລະ ບັນດາຂະແໜງການທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ໃຫ້ໄດ້ຮັບຜົນດີ.

**ມາດຕາ 26 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ແມ່ນໃຊ້ແທນ ຂໍ້ຕົກລົງສະບັບເລກທີ 4125/ກປ, ລົງວັນທີ 20 ພະຈິກ 2019 ແລະ ມີຜົນບັງຄັບໃຊ້ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້**

ກະຊວງກະສິກຳ ແລະ ປ່າໄມ້

ລັດຖະມົນຕີ

ປອ.ລຽນ ທິແກ້ວ